ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

<u>ສຳນັກງານນາຍົກລັດຖະມົນຕີ</u>

ເລກທີ 150 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 18.05.2007.

# ດຳລັດ

## ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນຳໃຊ້ເງິນກີບ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມລັດຖະບັນຍັດ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ສປປ, ລົງວັນທີ 09 ສິງຫາ 2002;
- ອີງຕາມການສະເໜີ ຂອງທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 74/ທຫລ, ລົງວັນທີ 26 ມີນາ 2007.

ໃນໄລຍະຜ່ານມາ ຢູ່ປະເທດພວກເຮົາໄດ້ມີການນຳໃຊ້ເງິນຕາຕ່າງປະເທດ ຢ່າງຊະຊາຍ ການແຈ້ງລາຄາສິນຄ້າ ແລະ ຄ່າບໍລິການ, ການຮັບຊຳລະ, ການລົງໂຄສະນາຂາຍສິນຄ້າເປັນເງິນຕາຕ່າງປະເທດ ຢ່າງແຜ່ຫລາຍ ຊຶ່ງເປັນອຸປະສັກໃນການຈັດຕັ້ງປະຕິບັດນະໂຍບາຍເງິນຕາແຫ່ງຊາດ ອັນເປັນການລະເມີດລັດຖະບັນຍັດ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ສປປ, ລົງວັນທີ 09 ສິງຫາ 2002 ຢ່າງຮ້າຍແຮງ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ:**

**ມາດຕາ 1: <u>ຈຸດປະສົງ.</u>**

ເພື່ອເຮັດໃຫ້ເນື້ອໃນຈິດໃຈ ຂອງລັດຖະບັນຍັດ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ຊຶ່ງເປັນກົດໝາຍທີ່ມີຄວາມສຳຄັນ ຕໍ່ການຮັກສາສະຖຽນລະພາບທາງດ້ານການເງິນ-ເງິນຕາ ແລະ ເສດຖະກິດຂອງປະເທດ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຕັມສ່ວນ ແລະ ມີຄວາມສັກສິດ ທັງເປັນການເຊີດຊູນ້ຳໃຈຮັກຊາດ ແລະ ຄວາມເປັນເອກະລາດ ເປັນເຈົ້າຕົນເອງ ທາງດ້ານເສດຖະກິດ, ຊຸກຍູ້ສົ່ງເສີມການນຳໃຊ້ເງິນກີບ ແລະ ຍົກສູງຄຸນຄ່າເງິນຕາຂອງຊາດ, ຢຸດຕິການນຳໃຊ້ເງິນຕາຕ່າງປະເທດ ຢ່າງຊະຊາຍ ຢູ່ໃນປະເທດພວກເຮົາ.

ມາດຕາ 4: ບັນດາທ່ານລັດຖະມົນຕີ, ຫົວໜ້າອົງການທຽບເທົ່າອ້ອມຂ້າງສູນກາງ, ເຈົ້າຄອງນະຄອນຫລວງ, ບັນດາທ່ານເຈົ້າແຂວງໃນທົ່ວປະເທດ ແລະ ທຸກພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນດີ.

ມາດຕາ 5: ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ